**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0982 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 19 ຕຸລາ 2021

# ຄຳສັ່ງ

## ວ່າດ້ວຍ ການລົບລ້າງການອອກໃບອະນຸຍາດນຳເຂົ້າລົດແທຣັກເຕີ ທີ່ຮັບໃຊ້ສະເພາະການຜະລິດກະສິກຳ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດໃນ ສປປ ລາວ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018;
- ອີງຕາມ ໜັງສືສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ ເລກທີ 3431/ກຂອ, ລົງວັນທີ 14 ຕຸລາ 2021.

ເພື່ອຫຼຸດຜ່ອນຂັ້ນຕອນ ແລະ ຕົ້ນທຶນໃນການຜະລິດກະສິກຳ ແນໃສ່ຊຸກຍູ້ສົ່ງເສີມການຜະລິດກະສິກຳໃຫ້ກາຍເປັນສິນຄ້າ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

### ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງ:

1. ລົບລ້າງການອອກໃບອະນຸຍາດການນຳເຂົ້າລົດແທຣັກເຕີທຸກປະເພດທີ່ຮັບໃຊ້ສະເພາະການຜະລິດກະສິກຳທີ່ ນອນຢູ່ໃນໝວດລະຫັດພາສີ 8701 ຂອງສາລະບານອັດຕາພາສີ ຂອງ ສປປ ລາວ ຊຶ່ງປະກອບມີ ລົດແທຣັກເຕີແບບນັ່ງຂັບ ແລະ ລົດແທຣັກເຕີຊະນິດທີ່ຄົນຂັບຕ້ອງຍ່າງນຳຫຼັງ (ລົດໄຖນາເດີນຕາມ), ຊຶ່ງການນຳເຂົ້າແມ່ນໃຫ້ປະຕິບັດ ຕາມເງື່ອນໄຂ ທີ່ກຳນົດໃນຄຳສັ່ງສະບັບນີ້ ຄືດັ່ງນີ້:

1.1 ການນຳເຂົ້າລົດແທຣັກເຕີແບບນັ່ງຂັບ ຕ້ອງໄດ້ຂໍໃບອະນຸຍາດດ້ານເຕັກນິກຍານພາຫະນະກົນຈັກນຳເຂົ້າ ແລະ ຂຶ້ນທະບຽນຢູ່ ສປປ ລາວ ນຳ ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ກ່ອນການແຈ້ງເສຍພາສີ-ອາກອນນຳເຂົ້າຢູ່ດ່ານພາສີ ແລະ ຕ້ອງນຳເຂົ້າຜ່ານດ່ານສາກົນ ເທົ່ານັ້ນ;

1.2 ການນຳເຂົ້າລົດແທຣັກເຕີຊະນິດທີ່ຄົນຂັບຕ້ອງຍ່າງນຳຫຼັງ (ລົດໄຖນາເດີນຕາມ) ສາມາດດຳເນີນການແຈ້ງເສຍພາສີ-ອາກອນນຳເຂົ້າຢູ່ດ່ານພາສີໄດ້ເລີຍ ໂດຍບໍ່ຕ້ອງໄດ້ຂໍໃບອະນຸຍາດດ້ານເຕັກນິກຍານພາຫະນະກົນຈັກນຳເຂົ້າ ແລະ ຂຶ້ນທະບຽນ ຢູ່ ສປປ ລາວ ນຳ ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ. ການນຳເຂົ້າສາມາດນຳເຂົ້າຜ່ານ ດ່ານຊາຍແດນທ້ອງຖິ່ນ, ດ່ານຊາຍແດນປະເພນີ ແລະ ດ່ານສາກົນ;

1.3 ການນຳເຂົ້າລົດແທຣັກເຕີ ສຳລັບການຜະລິດກະສິກຳທຸກປະເພດ ທີ່ນຳເຂົ້າເພື່ອນຳໃຊ້ໃນການຜະລິດກະສິກຳສະເພາະຂອງຊາວກະສິກອນ ແມ່ນສາມາດນຳເຂົ້າໄດ້ ຈຳນວນ ໜຶ່ງ ຄັນ ຕໍ່ ໜຶ່ງ ຄອບຄົວ ໂດຍ

ຕ້ອງມີການຢັ້ງຢືນຈຸດປະສົງການນຳເຂົ້າເພື່ອຮັບໃຊ້ການຜະລິດກະສິກຳຂອງຄອບຄົວ ຈາກອຳນາດການປົກຄອງບ້ານ ບ່ອນທີ່ຕັ້ງອາໄສຢູ່. ສຳລັບການນຳເຂົ້າຂອງກຸ່ມການຜະລິດ ຫຼື ສະຫະກອນ ແມ່ນຕ້ອງໄດ້ຮັບການຢັ້ງຢືນຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ບ່ອນທີ່ ກຸ່ມການຜະລິດ ຫຼື ສະຫະກອນ ຕັ້ງຢູ່ ໂດຍຢັ້ງຢືນຈຸດປະສົງການນຳເຂົ້າເພື່ອນຳໃຊ້ໃນກຸ່ມການຜະລິດ ຫຼື ສະຫະກອນ ແລະ ຈຳນວນການນຳເຂົ້າ ທີ່ແທດເໝາະກັບເນື້ອທີ່ການຜະລິດຕົວຈິງ;

1.4 ການນຳເຂົ້າລົດແທຣັກເຕີ, ອາໄຫຼ່ ແລະ ອຸປະກອນຂອງລົດແທຣັກເຕີ ທີ່ຮັບໃຊ້ສະເພາະການຜະລິດກະສິກຳ ເພື່ອຈຳໜ່າຍພາຍໃນ ຕ້ອງເປັນຫົວໜ່ວຍທຸລະກິດທີ່ມີໃບທະບຽນວິສາຫະກິດ, ມີການບໍລິການຫຼັງການຂາຍ ແລະ ໃບອະນຸຍາດດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ (ສຳລັບຜູ້ລົງທຶນຕ່າງປະເທດ). ການນຳເຂົ້າ ຕ້ອງຜ່ານດ່ານສາກົນເທົ່ານັ້ນ;

2. ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ໃນການເຜີຍແຜ່ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ມີປະສິດທິຜົນສູງ;

3. ຄຳສັ່ງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ ແລະ ນຳໃຊ້ປ່ຽນແທນ ຄຳສັ່ງວ່າດ້ວຍການລົບລ້າງການອອກໃບອະນຸຍາດນຳເຂົ້າລົດແທຣັກເຕີ ເລກທີ 0807/ອຄ.ກຂອ, ລົງວັນທີ 02 ກັນຍາ 2020.

**ລັດຖະມົນຕີ**

ປອ.ຄຳແພງ ໄຊສົມແພງ